ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 692 /ຫກ

ນະຄອນຫຼວງວຽງຈັນ 24 NOV 2014

# ແຈ້ງການ

**ເຖິງ:** ບັນດາອົງການປົກຄອງທ້ອງຖິ່ນ, ທະຫານ, ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນລາວບັນດາເຜົ່າ ທົ່ວສັງຄົມຊາບ.

**ເລື່ອງ:** ການລະດົມເງິນທຶນຂອງບາງບໍລິສັດທີ່ປຶກສາ ທີ່ບໍ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ.

- ອີງຕາມ ກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ເລກທີ 05/95/ສພຊ, ລົງວັນທີ 14 ຕຸລາ 1995.
- ອີງຕາມ ກົດໝາຍ ອາຍາ ສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 09 ພະຈິກ 2005.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ: ປະຈຸບັນໄດ້ມີບໍລິສັດທີ່ປຶກສາທາງດ້ານການລົງທຶນ ຈຳກັດ ຈຳນວນໜຶ່ງໄດ້ມີການເຄື່ອນໄຫວຄ້າຍຄືກັບ ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ດ້ວຍຮູບການໂຄງສະນາລະດົມທຶນຢູ່ພາຍໃນ ສປປ ລາວ ຊຶ່ງໄດ້ໃຊ້ວິທີການຮັບເງິນຝາກ ແລະ ໃຫ້ອັດຕາດອກເບ້ຍທີ່ສູງກວ່າ 20% ຕໍ່ປີ, ແຕ່ບໍລິສັດທີ່ປຶກສາດັ່ງກ່າວ ແມ່ນບໍ່ໄດ້ຮັບການອະນຸຍາດດຳເນີນທຸລະກິດ ໃນຮູບການດັ່ງກ່າວ ຢ່າງຖືກຕ້ອງຕາມລະບຽບກົດໝາຍ ຈາກ ທະນາຄານແຫ່ງ ສປປ ລາວ. ສະນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ໃຫ້ເພີ່ມທະວີຄວາມເອົາໃຈໃສ່ໃນການຊອກຮູ້ ແລະ ມີສະຕິລະວັງຕົວ ຕໍ່ບັນດາບໍລິສັດທີ່ປຶກສາດັ່ງກ່າວ.

ບຸກຄົນໃດຫາກໄດ້ເຄື່ອນໄຫວທຸລະກິດທີ່ມີລັກສະນະເປັນ ທະນາຄານທຸລະກິດ ຫຼື ສະຖາບັນການເງິນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ແມ່ນຜິດຕໍ່ກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ເລກທີ 05/95/ສພຊ, ລົງວັນທີ 14 ຕຸລາ 1995 ມາດຕາ 57 ການດຳເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ກົດໝາຍ ອາຍາ ສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 09 ພະຈິກ 2005 ມາດຕາ 62 ການທຳລາຍກິດຈະການຂອງລັດ ແລະ ຂອງສັງຄົມ. ການເຄື່ອນໄຫວດັ່ງກ່າວ ແມ່ນເປັນການທຳລາຍຄວາມໝັ້ນຄົງລະບົບເສດຖະກິດ ຂອງແໜງການເງິນ-ການທະນາຄານ ກໍຄືຂອງ ສປປ ລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ມີສະຕິລະວັງຕົວຕໍ່ການເຄື່ອນໄຫວດັ່ງກ່າວ.

ດ້ວຍຄວາມນັບຖື,

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ພາສີ ພົມມະກອນ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**